ACT ELECTION 2024

# ການເລືອກຕັ້ງສຳລັບ ສະພານິຕິບັນຍັດເຂດ ACT



LAO

Elections ACT

ACT ELECTORAL COMMISSION OFFICERS OF THE ACT LEGISLATIVE ASSEMBLY

ການລົງຄະແນນຂອງທ່ານ. ອະນາຄົດຂອງ Canberra.

Authorised by Damian Cantwell AM CSC for the ACT Electoral Commission

ACT ELECTION 2024

ການເລືອກຕັ້ງຄັ້ງຕໍ່ໄປສໍາລັບສະພານິຕິບັນຍັດເຂດ ACT ຈະໄດ້ຈັດຂຶ້ນໃນເດືອນ ຕຸລາ 2024.

ຢູ່ໃນເຂດ ACT ສະພາຂອງພວກເຮົາເອີ້ນວ່າສະພານິຕິບັນຍັດ. ສະພານີ້ມີຜູ້ແທນ 25 ທ່ານເຊິ່ງເປັນຜູ້ສ້າງກົດໝາຍສໍາລັບເຂດ ACT. ໂດຍການລົງຄະແນນສຽງໃນການເລືອກຕັ້ງຄັ້ງນີ້, ທ່ານຈະມີໂອກາດເລືອກເອົາຄົນທີ່ຈະໄປຕາງໜ້າໃຫ້ທ່ານໃນສະພາ. ການລົງຄະແນນສຽງແມ່ນໂອກາດຂອງທ່ານທີ່ຈະຊ່ວຍກໍານົດອະນາຄົດຂອງ Canberra.

ມີ ເຂດເລືອກຕັ້ງ ຫ້າແຫ່ງ (ເຂດຕ່າງໆສໍາລັບ ເລືອກຕັ້ງ) ໃນ ACT: Ginninderra, Brindabella, Kurrajong, Murrumbidgee ແລະ Yerrabi. ຜູ້ໄປລົງຄະແນນສຽງໃນແຕ່ລະເຂດເລືອກຕັ້ງຈະເລືອກເອົາຜູ້ແທນຫ້າທ່ານເພື່ອຕາງໜ້າໃຫ້ຕົນໃນສະພານິຕິບັນຍັດ.

ໃຫ້ກວດເບິ່ງວ່າທ່ານຕົກຢູ່ໃນເຂດເລືອກຕັ້ງໃດ ໂດຍ ເຂົ້າໄປເບິ່ງ www.elections.act.gov.au

## ທ່ານໄດ້ລົງທະບຽນແລ້ວບໍ?

ຖ້າທ່ານເປັນຄົນສັນຊາດອອສເຕຣລຽນ, ອາໄສຢູ່ໃນACT ແລະມີອາຍຸຮອດ 18 ປີ ຫຼືໃຫຍ່ກວ່ານັ້ນ,ທ່ານຕ້ອງໝັ້ນໃຈວ່າທ່ານໄດ້ລົງທະບຽນຢ່າງຖືກຕ້ອງເພື່ອໄປລົງຄະແນນສຽງ.

ໃຫ້ເຂົ້າໄປເບິ່ງ www.elections.act.gov.au ເພື່ອລົງທະບຽນໄປລົງຄະແນນສຽງ ຫຼື ອັບເດດການລົງທະບຽນຂອງທ່ານ.

## ທ່ານຕ້ອງໄປລົງຄະແນນສຽງບໍ?

ແມ່ນແລ້ວ.ການລົງຄະແນນສຽງໃນການເລືອກຕັ້ງຄັ້ງນີ້ແມ່ນເປັນການບັງຄັບຖ້າທ່ານມີຊື່ຢູ່ໃນກອງທະບຽນເລືອກຕັ້ງ (ລາຍຊື່ຂອງຜູ້ເລືອກຕັ້ງ) ເຊິ່ງ ອາໄສຢູ່ໃນທີ່ຢູ່ໃດໜຶ່ງໃນເຂດ ACT ແລະທ່ານເປັນຄົນສັນຊາດອອສເຕຣລຽນທີ່ມີອາຍຸ 18 ປີ ຫຼືໃຫຍ່ກວ່ານັ້ນ. ຖ້າທ່ານບໍ່ໄປລົງຄະແນນສຽງທ່ານອາດຖືກປັບໃໝ.

ການລົງຄະແນນສຽງຂອງທ່ານແມ່ນເປັນຄວາມລັບ ແລະມີພຽງແຕ່ທ່ານເອງເທົ່ານັ້ນທີ່ຈະຮູ້ວ່າທ່ານໄດ້ລົງຄະແນນສຽງໃຫ້ໃຜ.



Authorised by Damian Cantwell AM CSC for the ACT Electoral Commission

## ການລົງຄະແນນສຽງ

ທ່ານສາມາດລົງຄະແນນສຽງຢູ່ໃນການເລືອກຕັ້ງຄັ້ງນີ້ ນັບຈາກວັນທີ 8 ຕຸລາ 2024 ຈົນເຖິງວັນທີ 19 ຕຸລາ 2024.

ມີສູນປ່ອນບັດລ່ວງໜ້າ 10 ແຫ່ງ ທົ່ວເຂດ ACT ເຊິ່ງເປີດ 2 ອາທິດກ່ອນວັນເລືອກຕັ້ງ.



ບ່ອນປ່ອນບັດ 50 ແຫ່ງຈະເປີດໃນມື້ສຸດທ້າຍຂອງການລົງຄະແນນສຽງ - 19 ຕຸລາ 2024.

ທ່ານສາມາດໄປລົງຄະແນນສຽງໄດ້ຕາມສະຖານທີ່ປ່ອນບັດແຫ່ງໃດແຫ່ງໜຶ່ງ.

ໃຫ້ເຂົ້າໄປເບິ່ງ www.elections.act.gov.au ເພື່ອໃຫ້ ທີ່ຢູ່ຂອງບ່ອນປ່ອນບັດ.

## ຊົ່ວໂມງເປີດໃຫ້ປ່ອນບັດ:

- ວັນອັງຄານ 8 ຕຸລາ ເຖິງວັນສຸກ 11 ຕຸລາ 2024: 10:30am – 6:30pm
- ວັນເສົາ 12 ຕຸລາ 2024: 9am – 5pm
- ວັນຈັນ 14 ຕຸລາ ເຖິງວັນພະຫັດ 17 ຕຸລາ 2024: 10:30am – 6:30pm
- ວັນສຸກ 18 ຕຸລາ 2024: 9am – 8pm
- ວັນເສົາ 19 ຕຸລາ 2024: 8am – 6pm

## ການເລືອກຕັ້ງທາງໄປສະນີ

ຖ້າທ່ານບໍ່ສາມາດໄປບ່ອນປ່ອນບັດໄດ້ ທ່ານອາດຈະສະໝັກຂໍເລືອກຕັ້ງທາງໄປສະນີ. ຊອງທີ່ບັນຈຸເຈັ້ຍປ່ອນບັດຈະຖືກສົ່ງມາຫາທີ່ຢູ່ທີ່ທ່ານຂຽນໄວ້ໃນໃບຄໍາຮ້ອງ.

ທ່ານສາມາດສະໝັກຂໍເລືອກຕັ້ງທາງໄປສະນີ ນັບຈາກວັນທີ 15 ກໍລະກົດ 2024. ແຕ່ວ່າພວກເຮົາບໍ່ ສາມາດສົ່ງເຈັ້ຍປ່ອນບັດຂອງທ່ານອອກໄປຫາທ່ານໄດ້ ຈົນກວ່າຈະຮອດວັນທີ 30 ກັນຍາ 2024.



ຍື່ນສະໝັກ:
ທາງອອນລາຍນ໌: www.elections.act.gov.au
ໂທລະສັບ: 6205 0033



Authorised by Damian Cantwell AM CSC for the ACT Electoral Commission

ACT
ELECTION 2024

## ໂຮງໝໍ ແລະ ບ້ານພັກຜູ້ສູງອາຍຸ



ຖ້າທ່ານເປັນຄົນເຈັບຢູ່ໃນໂຮງໝໍຫຼືເປັນຜູ້ອາໄສຢູ່ໃນບ້ານພັກຜູ້ສູງອາຍຸ, ທີມງານເລືອກຕັ້ງອາດຈະມາຢ້ຽມຢາມທ່ານເພື່ອມາເອົາເຈັ້ຍປ່ອນບັດຂອງທ່ານໃນລະຫວ່າງອາທິດໜຶ່ງກ່ອນໜ້າວັນເລືອກຕັ້ງ.

ໃຫ້ຖາມທາງໂຮງໝໍຫຼືບ້ານພັກຜູ້ສູງອາຍຸຂອງທ່ານວ່າທີມງານປ່ອນບັດຈະມາຢ້ຽມຢາມທ່ານບໍ.

## ການເລືອກຕັ້ງທາງຄອມພິວເຕີ



ທ່ານສາມາດເລືອກຕັ້ງຢູ່ໃນຄອມພິວເຕີໄດ້ຕາມສູນປ່ອນບັດລ່ວງໜ້າ. ການເລືອກຕັ້ງທາງຄອມພິວເຕີມີຄໍາແນະນໍາທີ່ຂຽນໄວ້ເປັນພາສາຂອງທ່ານ. ນອກນີ້ ມັນກໍຍັງຈະແນະນໍາວິທີຂຽນປ່ອນບັດໃຫ້ທ່ານ.

ໃຫ້ເຂົ້າໄປເບິ່ງ www.elections.act.gov.au ເພື່ອຊອກຫາທີ່ຢູ່ຂອງສູນປ່ອນບັດລ່ວງໜ້າ.

## ການເລືອກຕັ້ງໂດຍຂຽນໃສ່ເຈັ້ຍ

ທ່ານສາມາດເລືອກຕັ້ງໂດຍຂຽນໃສ່ເຈັ້ຍໄດ້ທີ່ສະຖານທີ່ປ່ອນບັດແຫ່ງໃດແຫ່ງໜຶ່ງ.

ຖ້າທ່ານເລືອກຕັ້ງໃສ່ເຫຼີງເຈັ້ຍປ່ອນບັດ ທ່ານຕ້ອງຂຽນເລກ 1,2,3,4,5 ແລະຕໍ່ໆໄປລົງໃສ່ປ່ອງສີ່ຫຼ່ຽມທີ່ຢູ່ຕິດກັບຊື່ຂອງຜູ້ລົງສະໝັກ, ລຽງຕາມລໍາດັບທີ່ທ່ານຕ້ອງການໃຫ້ຄະແນນຕໍ່ຜູ້ລົງສະໝັກ.

ໃຫ້ຂຽນເລກ 1 ຕິດກັບຊື່ຜູ້ລົງສະໝັກທີ່ທ່ານມັກທີ່ສຸດ.

ໃຫ້ຂຽນເລກ 2 ຕິດກັບຊື່ຜູ້ລົງສະໝັກທີ່ທ່ານມັກຫຼາຍເປັນທີສອງ ແລະ ດັ່ງນີ້ຕໍ່ໆໄປ.

ຢ່າຂີດຕິກ ຫຼື ໝາຍໄຂວ່ຕີນກາ. ແລະຢ່າໃຊ້ເລກດຽວກັນຫຼາຍກວ່າໜຶ່ງຄັ້ງ.



ທ່ານຕ້ອງຂຽນເລກລົງໃສ່ຢ່າງນ້ອຍຫ້າປ່ອງຂອງປ່ອງສີ່ຫຼ່ຽມທັງໝົດ ເພາະວ່າມີຜູ້ລົງສະໝັກຫ້າຄົນທີ່ຈະຕ້ອງຖືກເລືອກ. ແຕ່ວ່າທ່ານສາມາດຂຽນເລກລົງ ໃສ່ຫຼາຍປ່ອງປານໃດກໍໄດ້ຕາມທີ່ທ່ານເລືອກ. ທ່ານສາມາດຂຽນເລກໃສ່ທຸກໆປ່ອງ ຫຼື ພຽງປ່ອງດຽວກໍໄດ້. ອັນນັ້ນແມ່ນແລ້ວແຕ່ທ່ານເລືອກ.



Authorised by Damian Cantwell AM CSC for the ACT Electoral Commission

ACT ELECTION 2024

# ຄວາມຊ່ວຍເຫຼືອໃນການເລືອກຕັ້ງ



ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອທີ່ບ່ອນປ່ອນບັດ, ໃຫ້ຖາມກັບຄົນທີ່ໃສ່ເສື້ອແຫວັດສີຂຽວ. ເຂົາເຈົ້າຈະສາມາດຊ່ວຍທ່ານໄດ້. ເຂົາເຈົ້າສາມາດຮອດວ່າຊ່ວຍເຫຼືອທ່ານຕື່ມເຈັ້ຍປ່ອນບັດໄດ້ຕາມຄວາມມັກຂອງທ່ານ, ພ້ອມທັງຮັກສາການເລືອກຕັ້ງຂອງທ່ານໄວ້ເປັນຄວາມລັບ.

## ຕິດຕໍ່ຫາພວກເຮົາ:

- ທີ່ຢູ່: Nara Centre, 3 Constitution Avenue, Canberra ACT 2601
- ທີ່ຢູ່ທາງໄປສະນີ: GPO Box 172, Canberra ACT 2601
- ໂທລະສັບ: 6205 0033 (ບໍລິການແປພາສາ & ແປເອກະສານ 131 450)
- ອີເມວ: elections@act.gov.au



Authorised by Damian Cantwell AM CSC for the ACT Electoral Commission


NEW SOUTH WALES
GINNINDERRA
MURRUMBIDGEE
KURRAJONG
BRINDABELLA
EXTENT OF MAIN MAP
AUSTRALIAN CAPITAL TERRITORY
NEW SOUTH WALES
New South Wales
HALL
HALL
TAYLOR
JACKA
MONCRIEFF
BONNER
CASEY
NGUNNAWAL
AMAROO
FORDE
YERRABI
(5 MEMBERS)
GUNGAHLIN
NICHOLLS
GUNGAHLIN
THROSBY
PALMERSTON
CRACE
FRANKLIN
HARRISON
GIRALANG
MITCHELL
KENNY
KALEEN
LAWSON
DUNLOP
FRASER
SPENCE
CHARNWOOD
FLYNN
MACGREGOR
MELBA
EVATT
LATHAM
MCKELLAR
MACNAMARA
FLOREY
HOLT
BELCONNEN
STRATHNAIRN
HIGGINS
SCULLIN
BELCONNEN
PAGE
BRUCE
HAWKER
WEETANGERA
MACQUARIE
ARANDA
COOK
GINNINDERRA
(5 MEMBERS)
LYNEHAM
WATSON
DOWNER
HACKETT
DICKSON
O'CONNOR
AINSLIE
TURNER
BRADDON
KURRAJONG
(5 MEMBERS)
ACTON
CITY
REID
MAJURA
CANBERRA CENTRAL
CAMPBELL
WHITLAM
MOLONGLO VALLEY
DENMAN PROSPECT
MOLONGLO
PARKES
RUSSELL
YARRALUMLA
CAPITAL HILL
BARTON
CANBERRA AIRPORT
KOWEN
STROMLO
COOMBS
KINGSTON
PIALLIGO
FORREST
DEAKIN
FYSHWICK
WRIGHT
CURTIN
GRIFFITH
MURRUMBIDGEE
(5 MEMBERS)
HUGHES
OAKS ESTATE
HOLDER
NARRABUNDAH
DUFFY
WESTON
WODEN VALLEY
RED HILL
WESTON CREEK
LYONS
GARRAN
BEARD
RIVETT
STIRLING
PHILLIP
SYMONSTON
WARAMANGA
CHIFLEY
O'MALLEY
CHAPMAN
FISHER
PEARCE
MAWSON
JERRABOMBERRA
ISAACS
TORRENS
FARRER
HUME
KAMBAH
WANNIASSA
FADDEN
MACARTHUR
OXLEY
GOWRIE
MONASH
GREENWAY
TUGGERANONG
GILMORE
CHISHOLM
ISABELLA PLAINS
BRINDABELLA
(5 MEMBERS)
BONYTHON
RICHARDSON
CALWELL
THEODORE
PADDYS RIVER
GORDON
CONDER
BANKS
THARWA
New South Wales
AUSTRALIAN CAPITAL TERRITORY
FOR THE QUEEN, THE LAW AND THE PEOPLE
Redistribution of the Australian Capital Territory into electorates pursuant to the *Electoral Act 1992*
Electorates for the ACT Legislative Assembly of Brindabella, Ginninderra, Kurrajong, Murrumbidgee and Yerrabi
Electorate boundaries
Division boundaries
District boundaries
This map shows the boundaries of the ACT Legislative Assembly electorates of Brindabella, Ginninderra, Kurrajong, Murrumbidgee and Yerrabi and the number of members to be elected from each electorate as determined by the Augmented Electoral Commission pursuant to section 35 of the *Electoral ACT 1992*.
David Kalisch
Damian Cantwell AM CSC
Ed Killesteyn PSM
Ben Ponton
Greg Ledwidge
Beidar Cho
Augmented Electoral Commission
September 2023